ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0336 /ກປ

ນະຄອນຫລວງວຽງຈັນ, ວັນທີ 03-4-2017

# ແຈ້ງການ

**ເຖິງ :** ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ.

**ເລື່ອງ :** ການປະຕິບັດວຽກງານຄຸ້ມຄອງພະນັກງານ-ລັດຖະກອນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09/03/2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການມອບໝາຍບາງວຽກງານກ່ຽວກັບການຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ແກ່ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຮັບຜິດຊອບ ແລະ ແກ້ໄຂໂດຍກົງ ສະບັບ ເລກທີ 75/ນຍ ລົງວັນທີ 05 ກັນຍາ 2016.
- ອີງຕາມ ຄຳແນະນຳຂອງກະຊວງພາຍໃນ ສະບັບເລກທີ 15/ພນ, ລົງວັນທີ 08 ພະຈິກ 2016 ກ່ຽວກັບບັນດາວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ທີ່ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຮັບຜິດຊອບ ແລະ ແກ້ໄຂໂດຍກົງ
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0745/ກຈພ, ລົງວັນທີ 22/03/2017.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ: ໂດຍປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 75/ນຍ ລົງວັນທີ 05 ກັນຍາ 2016 ວ່າດ້ວຍການມອບໝາຍບາງວຽກງານກ່ຽວກັບການຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ແກ່ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຮັບຜິດຊອບ ແລະ ແກ້ໄຂໂດຍກົງ ຈຳນວນ 9 ວຽກ ຄື: 1) ການປະຕິບັດນະໂຍບາຍອຸດໜູນເທື່ອດຽວ, 2) ການປະຕິບັດນະໂຍບາຍຕໍ່ລັດຖະກອນທີ່ເຮັດວຽກກັບທາດເບື່ອ, ເຄມີ ແລະ ສານພິດຕ່າງໆ, 3) ການປະຕິບັດນະໂຍບາຍຕໍ່ລັດຖະກອນເສຍກຳລັງແຮງງານ, 4) ການເລື່ອນລັດຖະກອນຝຶກງານຂຶ້ນເປັນລັດຖະກອນສົມບູນ, 5) ການເລື່ອນຂັ້ນປົກກະຕິໃຫ້ລັດຖະກອນ, 6) ການອະນຸມັດດັດແກ້ຊັ້ນ-ຂັ້ນເງິນເດືອນຕາມອາຍຸການ (ພື້ນຊັ້ນ), 7) ການອະນຸມັດດັດແກ້ຊັ້ນ-ຂັ້ນເງິນເດືອນຕາມການສອບເສັງ, 8) ການອະນຸມັດດັດແກ້ຊັ້ນ-ຂັ້ນເງິນເດືອນຕາມຕຳແໜ່ງບໍລິຫານ ແລະ 9) ການອະນຸມັດດັດແກ້ຊັ້ນ-ຂັ້ນເງິນເດືອນຕາມການຕົກຄ້າງເລື່ອນຂັ້ນປົກກະຕິ ແມ່ນມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ໂດຍປະກອບເອກະສານນຳສະເໜີຜ່ານພະແນກພາຍໃນແຂວງ ເພື່ອສະເໜີຂໍອະນຸມັດຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແມ່ນປະກອບເອກະສານສະເໜີຜ່ານຫ້ອງການພາຍໃນເມືອງ ເພື່ອສະເໜີຂໍອະນຸມັດຈາກເຈົ້າເມືອງ. ພາຍຫຼັງໄດ້ຮັບອະນຸມັດແລ້ວ ໃຫ້ສົ່ງສຳເນົາເອກະສານດັ່ງກ່າວຈຳນວນ 01 ຊຸດ ເຖິງກົມຈັດຕັ້ງ ແລະ ພະນັກງານພາຍໃນ 05 ວັນລັດຖະການ, ສ່ວນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ສັງລວມ ແລະ ນຳສົ່ງເຖິງກົມຈັດຕັ້ງ ແລະ ພະນັກງານພາຍໃນ 10 ວັນລັດຖະການ. ສຳລັບບົດສະຫຼຸບລາຍງານວຽກງານຄຸ້ມຄອງພະນັກງານ-ລັດຖະກອນປະຈຳປີ ແມ່ນໃຫ້ສົ່ງກ່ອນວັນທີ 25 ເດືອນ ພຶດສະພາ ຂອງທຸກປີ. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຂໍ້ມູນຂອງ ພະນັກງານ-ລັດຖະກອນບໍ່ຄົບຖ້ວນ ແລະ ບໍ່ທັນຈະແຈ້ງ ໃຫ້ປະສານກັບກົມຈັດຕັ້ງ ແລະ ພະນັກງານ ເພື່ອພ້ອມກັນແກ້ໄຂໃຫ້ທັນເວລາ. ການຈັດຕັ້ງປະຕິບັດແມ່ນເລີ່ມແຕ່ງວດ III (01 ກໍລະກົດ 2017) ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ລຽນ ທີແກ້ວ